ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ວິທະຍາໄລຄູສາລະວັນ ເລກທີ /ວຄວ
ພະແນກວິຊາການ ສາລະວັນ, ລົງວັນທີ............................

# ບົດລາຍງານ

**ຮຽນ:** ທ່ານຫົວໜ້າກົມຈັດຕັ້ງ ແລະ ພະນັກງານກະຊວງສຶກສາທິການ ແລະ ກິລາທີ່ນັບຖືຢ່າງສູງ
**ເລື່ອງ:** ຂໍລາຍງານສະພາບການປະຕິບັດຫຼັກສູດການຮຽນ-ການສອນ ສາຍຄູພາສາລາວ ພາຍໃຕ້ໂຄງການພັດທະນາຂະແໜງການສຶກສາ ເພື່ອຈ້າງງານ (EESDP) ລະບົບຕໍ່ເນື່ອງໄລຍະພັກສິ້ນປີຮຽນ.

- ອີງຕາມ: ແຈ້ງການຫົວໜ້າກົມຈັດຕັ້ງ ແລະ ພະນັກງານກະຊວງສຶກສາທິການ ແລະ ກິລາ ເລື່ອງການລົງຕິດຕາມຄູສອນທີ່ໄດ້ຮັບທຶນຍົກລະດັບປະລິນຍາຕີ (ຕໍ່ເນື່ອງ) ພາຍໃຕ້ໂຄງການພັດທະນາຂະແໜງການສຶກສາ ເພື່ອຈ້າງງານ (EESDP) ໄລຍະພັກສິ້ນປີຮຽນ ຢູ່ວິທະຍາໄລຄູ ສາລະວັນ.
- ອີງຕາມ: ແຜນການເຄື່ອນໄຫວວຽກງານວິຊາການ ປະຈຳສົກຮຽນ 2023-2024 ສະບັບເລກທີ 887/ວຄວ, ລົງວັນທີ 5 ພະຈິກ 2023.
- ອີງໃສ່ ບົດລາຍການຕິດຕາມ-ກວດກາ ໃນການປະຕິບັດຫຼັກສູດຂອງພາກວິຊາສ້າງຄູພາສາລາວ-ວັນນະຄະດີ ປະຈຳສົກຮຽນ 2023-2024

## I. ສະພາບລວມ

ໂດຍປະຕິບັດຕາມແຜນຍຸດທະສາດການສ້າງຄູ 2006-2015 ແລະ ແຜນດໍາເນີນງານແຕ່ປີ 2006-2010, ເຊິ່ງເປັນໄລຍະຂອງການສ້າງຄູ, ການຝຶກອົບຮົມຄູປະຈໍາການ, ການຍົກລະດັບ ແລະ ການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ. ເພື່ອສືບຕໍ່ຍົກສູງຄຸນນະພາບການສຶກສາ ໂດຍສະເພາະການພັດທະນາວິຊາຊີບຄູຢ່າງຕໍ່ເນື່ອງ, ໄລຍະຜ່ານມາໂຄງການພັດທະນາຂະແໜງການສຶກສາ ເພື່ອຈ້າງງານ ກະຊວງສຶກສາທິການ ແລະ ກິລາ ໄດ້ສະໜອງທຶນຍົກລະດັບໃຫ້ແກ່ຄູສອນມັດທະຍົມ ໂດຍການຄັດເລືອກເອົາຄູມັດທະຍົມສຶກສາໃນຊຸດທີ 1 ຈໍານວນ 60 ຄົນ, ແລະ ຊຸດທີ 2 ຈານວນ 300 ຄົນ, ໃນນັ້ນ, ວິທະຍາໄລຄູສາລະວັນໄດ້ຮັບສາຍຄູພາສາລາວ-ວັນນະຄະດີໃນຊຸດທີ 2 ຈໍານວນ 25 ຄົນ, ຍິງ 14 ຄົນ, ມາຈາກພາກສ່ວນແຂວງສາລະວັນ ຈໍານວນ 7 ຄົນ, ຍິງ 4 ຄົນ. ແຂວງ ເຊກອງ 8 ຈໍານວນ 6 ຄົນ, ຍິງ ແລະ ແຂວງ ບໍລິຄໍາໄຊ 10 ຈໍານວນ ຄົນ, ຍິງ 4 ຄົນ. ມາຮອດປະຈຸບັນແມ່ນກໍາລັງສຶກສາຢູ່ໃນປີທີ 2.

ສໍາລັບຈໍານວນຄູທີ່ສອນທີ່ສອນໃນຫຼັກສູດດັ່ງກ່າວຈໍານວນທັງໝົດ 21 ທ່ານ, ຍິງ 08 ທ່ານ. ປະລິນຍາເອກ 03 ທ່ານ, ຍິງ 0 ທ່ານ, ປະລິນຍາໂທ 10 ທ່ານ, ຍິງ 05 ທ່ານ, ປະລິນຍາຕີ 06 ທ່ານ,ຍິງ 03 ທ່ານ.

## II. ການຈັດຕັ້ງປະຕິບັດຫຼັກສູດ

### ກ. ພາກຮຽນ 1 ສົກ 2022-2023

ການຈັດຕັ້ງປະຕິບັດຫຼັກສູດ ການຮຽນ-ການສອນ ໃນສາຍພາສາລາວ ຂອງນັກສຶກສານັກສຶກສາພາຍໃຕ້ໂຄງການພັດທະນາຂະແໜງການສຶກສາ ເພື່ອຈ້າງງານ (EESDP) ໄລຍະພັກສິ້ນປີຮຽນ ປີ1 ຂອງພາກຮຽນທີ1 ສົກຮຽນ 2022-2023 ແມ່ນໄດ້ເລີ່ມປະຕິບັດແຕ່ວັນທີ 3 ກໍລະກົດ 2023 – 17 ພະຈິກ 2023 ຈໍານວນ 20 ອາທິດ

ແລະ ລວມມີວິຊາຮຽນໃນພາກຮຽນ1 ທັງໝົດ 13 ວິຊາ. ສາມາດປະຕິບັດຫຼັກສູດ ແລະ ການວັດຜົນ-ປະເມີນຜົນແມ່ນສຳເລັດຮ້ອຍເປີເຊັນ.

**ຂ. ພາກຮຽນ 2 ສົກ 2023-2024**

ການຈັດຕັ້ງປະຕິບັດຫຼັກສູດ ຂອງພາກຮຽນທີ 2 ສົກຮຽນ 2023-2024 ແມ່ນໄດ້ເລີ່ມປະຕິບັດແຕ່ວັນທີ 10 ມິຖຸນາ 2024 ຫາ 30 ສິງຫາ 2024 ລວມ 12 ອາທິດ ແລະ ລວມມີວິຊາຮຽນໃນພາກຮຽນ 2 ທັງໝົດ 13 ວິຊາຮຽນ ເຊິ່ງສາມາດປະຕິບັດຫຼັກສູດສະເລ່ຍໄດ້ 80% ແລະຈະສືບຕໍ່ຮຽນອອນລາຍ ອີກສອງເດືອນ ຫຼື ເທົ່າກັບ 2 ອາທິດ ເຊິ່ງຈະເລີ່ມແຕ່ວັນທີ 2 ກັນຍາ 2024 – 25 ຕຸລາ 2024 ຈຶ່ງຈະສຳເລັດ.

**ຄ. ດ້ານສະຖິຕິ**

➢ **ລາຍລະອຽດສະຖິຕິ ແລະ ສະພາບຂອງນັກສຶກສາໃນແຕ່ລະຫ້ອງ**

| ລ/ດ | ສາຂາຮຽນ | ລະບົບ | ຊ | ຕົ້ນພາກຮຽນ 1 ສົກຮຽນ 2022-2023 | | ທ້າຍພາກຮຽນ 2 ສົກຮຽນ 2023-2024 | | ນັກສຶກສາທີ່ມີຈຸດພິເສດ(ຂາດຮຽນຫຼາຍ) | ໝາຍເຫດ |
|---|---|---|---|---|---|---|---|---|---|
| | | | | ລວມ | ຍິງ | ລວມ | ຍິງ | | |
| 1 | ພາສາລາວ-ວັນນະຄະດີ (EESDP) | ຕໍ່ເນື່ອງ | 2 ຂ | 25 | 14 | 25 | 14 | 0 | |
| **ລວມ** | | | | 25 | 14 | 25 | 14 | | |

## III. ດ້ານງົບປະມານ

- ສົກຮຽນ 2022-2023 ຈຳນວນ 43.125.000 ກີບ
- ສົກຮຽນ 2023-2024 ຈຳນວນ 43.125.000 ກີບ
- ລວມ ທັງໝົດ 86.250.000 ກີບ

## IV. ຜົນສຳເລັດການຈັດຕັ້ງປະຕິບັດ

- ໄດ້ຂໍທິດຊີ້ນຳ ຫຼື ຄຳແນະນຳຈາກກະຊວງສຶກສາທິການ ແລະກິລາ ໂດຍສະເພາະກົມສ້າງຄູ ແລະ ກົມຈັດຕັ້ງ-ພະນັກງານ
- ໄດ້ປະສານສົມທົບກັບພະແນກສຶກສາທິການ ແລະ ກິລາທັງ 3 ແຂວງໃນການຕ້ອນຮັບນັກສຶກສາເຂົ້າຮຽນ ແລະ ແຈ້ງການເຂົ້າຮຽນ.
- ໄດ້ປຶກສາຫາລື, ພ້ອມທັງອອກຂໍ້ຕົກລົງແບ່ງຄວາມຮັບຜິດຊອບໃນການຮັບຕ້ອນ, ບໍລິການ, ຈັດສັນບ່ອນພັກພາອາໃສ ພ້ອມທັງນິເທດ ແນະນຳກ່ຽວກັບລະບຽບ ແລະ ຂໍ້ກຳນົດຕ່າງໆຂອງວິທະຍາໄລຄູໃຫ້ແກ່ນັກສຶກສາ
- ມອບໃຫ້ພະແນກວິຊາການເປັນໃຈກາງໃນການຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດຫຼັກສູດຂອງພາກວິຊາພາສລາວ-ວັນນະຄະດີ.
- ມອບໃຫ້ພາກວິຊາພາສາລາວ-ວັນນະຄະດີເປັນຜູ້ນຳພາຈັດການຮຽນການສອນ ແລະ ການເຄື່ອນໄຫວຮອບດ້ານຂອງນັກສຶກສາ.
- ໄດ້ລວມ, ໂອ້ລົມກັບທີ່ປຶກສາຫ້ອງ, ຄະນະຫ້ອງ ພ້ອມດ້ວຍສະມາຊິກໃນການສຶກສາການເມືອງແນວຄິດ, ວຽກງານວິຊາການ ແລະ ວຽກງານເຄື່ອນໄຫວນອກຫຼັກສູດ.
- ສຳເລັດການຈັດການຮຽນ ການສອນຕາມຫຼັກໂຄງຮ່າງລາຍວິຊາ
- ສຳເລັດການຈັດງານກິລາ, ສິລະປະ ແລະ ງານພົບປະອາດີເນັກສຶກສາ.
- ສຳເລັດການກວດກາກາງພາກໃນທຸກລາຍວິຊາ

– ສຳເລັດການແບ່ງປັນທີ່ປຶກສານຳພາຂຽນບົດວິໄຈໃຫ້ແກ່ນັກສຶກສາ

## V. ທິດທາງແຜນການເຄື່ອນໄຫວໃນຕໍ່ໜ້າ

**1. ວຽກງານແນວຄິດການເມືອງ**

ສືບຕໍ່ສຶກສາອົບຮົມແນວຄິດໃຫ້ນັກສຶກສາອຸ່ນອ່ຽງທຸ່ມທຽງຕັ້ງໜ້າສຶກສາຮ່ຳຮຽນເພື່ອໃຫ້ໄດ້ຮັບຜົນສຳເລັດຕາມ 5 ຫຼັກມູນຂອງຂະແໜງການສຶກສາ.

**2. ວຽກງານວິຊາສະເພາະ**

– ສືບຕໍ່ດຳເນີນການຮຽນການສອນທາງອອນລາຍ
– ຊຸກຍູ້, ຕິດຕາມ ການຮຽນການສອນ, ການປະເມີນຜົນໃນໄລຍະຮຽນອອນລາຍ
– ຊຸກຍູ້, ຕິດຕາມ ການຮຽນການສອນ ການເຮັດວິໄຈ ແລະ ຂຽນບົດລາຍງານຈົບຊັ້ນຂອງນັກສຶກສາ
– ຈັດສຳມະນາວຽກງານການຮຽນການສອນ ແລະ ຜົນການວິໄຈ
– ຈັດກິດຈະກຳເຄື່ອນໄຫວນອກຫຼັກສູດ

**ຂ. ຂໍ້ສະດວກ ແລະ ຂໍ້ຄົງຄ້າງ**

**ກ. ຂໍ້ສະດວກ**

1. ທາງຄະນະນຳທຸກຂັ້ນ ໄດ້ເອົາໃຈໃສ່, ຊຸກຍູ້ ແລະ ອຳນວຍຄວາມສະດວກຢ່າງໃກ້ຊິດ
2. ພະແນກວິຊາການ ແລະ ພາກວິຊາໄດ້ມີການປຶກສາຫາລື ແລະ ປະສານສົມທົບເຊິ່ງກັນ ແລະກັນ
3. ຄູສອນມີວຸດທິ, ຕຳແໜ່ງວິຊາການ ແລະ ປະສົບການສູງ
4. ມີເອກະສານປະກອບການສອນ, ຫ້ອງຮຽນ ແລະ ແຫ່ງການຮຽນຮູ້
5. ມີສະຖານທີ່ເໝາະສົມສຳລັບການດຳລົງຊີວິດ ແລະ ເຄື່ອນໄຫວນອກຫຼັກສູດ

**ຂ. ຂໍ້ຫຍຸ້ງຍາກ**

1. ການຈັດການຮຽນການສອນພາກປະຕິບັດຕົວຈິງຍັງພົບຂໍ້ຫຍຸ້ງຍາກ ຍ້ອນອຸປະກອນປະກອບການຮຽນການສອນ ໂດຍສະເພາະ ອຸປະກອນໄອຊີທີ.
2. ການຮຽບຮຽງເອກະສານປະກອບການສອນຍັງບໍ່ທັນພຽງພໍ ບາງລາຍວິຊາມີແຕ່ຄອດເອົາລາຍ ແຕ່ທັນມີເນື້ອໃນເທື່ອ.
3. ການຈັດການຮຽນການສອນອອນລາຍແບບລຽວທາມ ແມ່ນພົບຄວາມຫຍຸ້ງຍາກ ຍ້ອນເວລາ ແລະ ສັນຍານອິນເຕີເນັດ.

## V. ພາກສະເໜີ

1. ສະເໜີທາງຄະນະຮັບຜິດຊອບຂັ້ນຕ່າງໆສືບຕໍ່ໃຫ້ການຊຸກຍູ້ ແລະ ອານວຍສິ່ງສະດວກ
2. ສະໜອງອຸປະກອນການຮຽນການສອນ ຕາມຄວາມເໝາະສົມ (ໂດຍສະເພາະ ຄອມພິວເຕີຕັ້ງໂຕະ, ໂນດບຸກ)

**ວັນທີ .........................**

**ພະແນກວິຊາການ**